ຜ-ຟຟລ ຈັດກິດຈະກຳ ປູກຕົ້ນໄມ້ ແລະ ປ່ອຍປາ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຈັດກິດຈະກຳປູກຕົ້ນໄມ້ ແລະ ປ່ອຍປາ ທີ່ເຂື່ອນ ໄຟຟ້ານ້ຳຄານ 3, ເມືອງ ຊຽງເງິນ, ແຂວງ ຫຼວງພະບາງ ເພື່ອເປັນການສະເຫຼີມສະຫຼອງ ວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ ວັນທີ 01 ມິຖຸນາ ປະຈຳປີ 2024. ຈຸດປະສົງກິດຈະກຳດັ່ງກ່າວ ເພື່ອເປັນການເພີ່ມຄວາມອຸດົມສົມບູນ ດ້ານສິ່ງແວດລ້ອມ ແລະ ເປັນການສົ່ງເສີມການປູກໄມ້ໃຫ້ກາຍເປັນປ່າ, ຕົ້ນໄມ້ທີ່ນຳມະປູກໃນກິດຈະກຳດັ່ງກ່າວປະກອບດ້ວຍ ໄມ້ແຕ້ຄ່າ, ຕົ້ນໄມ້ດູ່ ແລະ ໄມ້ໃຫ້ໝາກຈຳນວນໜຶ່ງ ລວມ ທັງໝົດ 500 ຕົ້ນ, ນອກຈາກກິດຈະກຳປູກຕົ້ນໄມ້ແລ້ວ ຍັງມີກິດຈະກຳ ປ່ອຍປາ ລົງສູ່ສາຍນ້ຳຄານ ເຊິ່ງໃກ້ກັບສັນເຂື່ອນໄຟຟ້ານ້ຳຄານ 3 ປາທີ່ນຳມາປ່ອຍແມ່ນພັນປາພື້ນເມືອງຂອງທ້ອງຖິ່ນ ຈຳນວນ 20.000 ໂຕ ເພື່ອເປັນການອານຸລັກ ແລະ ຂະຫຍາຍພັນປາຕາມແຫຼ່ງນ້ຳທຳມະຊາດ, ໂອກາດດັ່ງກ່າວນີ້ ກໍ່ໄດ້ມີການມອບຕົ້ນໄມ້ຈຳນວນໜຶ່ງໃຫ້ ຕາງໜ້າ ບ້ານ ສາມັກຄີໄຊ ເຊິ່ງເປັນບ້ານຈັດສັນ ຂອງ ໂຄງການ ເຂື່ອນໄຟຟ້ານ້ຳຄານ 3 ເພື່ອນຳໄປປູກ ຕໍ່ໄປ ແລະ ໄດ້ມີການມອບອຸປະກອນການຮຽນ ແລະ ກິລາ ຈຳນວນໜຶ່ງ ເພື່ອເປັນການສົ່ງເສີມການສຶກສາ ໃຫ້ກັບນ້ອງໆນັກຮຽນ ບ້ານ ສາມັກຄີໄຊ.



